ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 39 /ຄອສພ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ແຈ້ງການແນະນຳ

**ເຖິງ:-** ຄະນະພັກ ບັນດາກະຊວງ, ອົງການ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
- ຄະນະພັກນະຄອນຫຼວງວຽງຈັນ ແລະ ຄະນະພັກແຂວງ ໃນທົ່ວປະເທດ;
- ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງ ໂຄສະນາ-ປາຖະກະຖາ ວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ ( 13/07 /1909 -13/07/2022)

- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ, ສະບັບເລກທີ 04/ກມສພ, ລົງວັນທີ 21 ມີນາ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.

ເພື່ອເຮັດໃຫ້ການຈັດຕັ້ງໂຄສະນາ-ປາຖະກະຖາ ວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ (13/07 /1909 -13/07/2022) ໄດ້ຮັບການຈັດຕັ້ງໂຄສະນາເຜີຍແຜ່ໃຫ້ເປັນຂະບວນການຟົດຟື້ນ, ມີເນື້ອໃນຄວາມໝາຍເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງທຸກເປົ້າໝາຍ, ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງອອກແຈ້ງການແນະນຳ ເພື່ອເປັນບ່ອນອີງໃນການຈັດຕັ້ງໂຄສະນາ - ປາຖະກະຖາເຊິ່ງມີເນື້ອໃນດັ່ງນີ້:

## I. ຈຸດປະສົງ-ຄາດໝາຍ:

1. ເພື່ອໂຄສະນາສຶກສາອົບຮົມໃຫ້ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າຊັ້ນຄົນຕ່າງໆເຫັນໄດ້ຜົນສຳເລັດ, ຜົນງານອັນຍິ່ງໃຫຍ່ຂອງປະທານ ສຸພານຸວົງ ຮ່ຳຮຽນເອົາຄຸນສົມບັດ, ສິນທຳປະຕິວັດ, ຄວາມເປັນແບບຢ່າງທີ່ເຫລື້ອມໃສສັດທາຂອງເພິ່ນ ເປັນພື້ນຖານໃນການເສີມສ້າງຄຸນທາດການເມືອງ, ມູນເຊື້ອຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ ຕິດພັນກັບຄວາມສາມັກຄີຂອງປະຊາຊົນສອງຊາດລາວ - ຫວຽດນາມ ໃນໂອກາດ ປີສາມັກຄີມິດຕະພາບລາວ - ຫວຽດນາມ, ຄຸນສົມບັດສິນທຳປະຕິວັດຂອງພະນັກງານ, ສະມາຊິກພັກ ໃຫ້ມີຄວາມໜັກແໜ້ນເພື່ອສ້າງພູມຕ້ານທານ ຕໍ່ກັບປະກົດການຫຍໍ້ທໍ້ ຂອງກົນໄກເສດຖະກິດຕະຫລາດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

2. ເພື່ອສືບຕໍ່ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ເຂົ້າສູ່ຊີວິດຕົວຈິງ ພ້ອມທັງປັບປຸງກໍ່ສ້າງພັກໃຫ້ເຂັ້ມແຂງທຸກດ້ານ ເປັນເຈົ້າການຍົກສູງສະຕິລະວັງຕົວຕໍ່ກົນອຸບາຍມ້າງເພຂອງອິດທິກຳລັງປໍລະປັກ, ຕີຖອຍບັນດາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ຮັບປະກັນສະຖຽນພາບທາງດ້ານການເມືອງຢ່າງໜັກແໜ້ນ ແລະ ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍກໍຄື ຄວາມສະຫງົບສຸກຂອງປະຊາຊົນ.



สแกนด้วย CamScanner

3. ເພື່ອປຸກລະດົມນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເປັນເຈົ້າຕົນເອງ, ເຊີດຊູບົດບາດການນຳພາຂອງພັກ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ໄປພ້ອມກັບການປຸກລະດົມຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ"

II. **ເນື້ອໃນໂຄສະນາ - ປາຖະກະຖາ**

1. ໃຫ້ນຳໃຊ້ເອກະສານ ໂຄສະນາ-ປາຖະກະຖາ ວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ

2. ເນື້ອໃນໂຄສະນາ-ປາຖະກະຖາ ໃຫ້ຕິດພັນກັບຜົນງານແຫ່ງການນຳພາ-ຊີ້ນຳຂອງຄະນະພັກ ກະຊວງ-ອົງການ ແລະ ທ້ອງຖິ່ນຂອງຕົນ.

III. **ເປົ້າໝາຍເຂົ້າຮ່ວມ ແລະ ກຳນົດເວລາ**

- ເປົ້າໝາຍ: ພະນັກງານ, ສະມາຊິກພັກ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ນັກຮຽນ-ນັກສຶກສາ ແລະ ປະຊາຊົນບັນດາເຜົ່າໃນທົ່ວສັງຄົມ.

- ກຳນົດເວລາ: ການຈັດຕັ້ງປາຖະກະຖາ ອາດໃຊ້ເວລາ 01 ຕອນ ຕາມເງື່ອນໄຂຕົວຈິງຂອງກະຊວງ-ອົງການ ແລະ ທ້ອງຖິ່ນ.

IV. **ຮູບການ ແລະ ວິທີຈັດຕັ້ງປະຕິບັດ**

1. ມອບໃຫ້ ຄະນະປະຈຳພັກຂອງກະຊວງ - ອົງການຕ່າງໆຊີ້ນຳ ແລະ ມອບໃຫ້ຄະນະໂຄສະນາອົບຮົມແຕ່ລະຂັ້ນ ຫຼື ຜູ້ທີ່ເຮັດວຽກງານການເມືອງ - ແນວຄິດ ເພື່ອດຳເນີນການປາຖະກະຖາ ໂຄສະນາສຶກສາອົບຮົມບັນດາເປົ້າໝາຍຕ່າງໆ.

2. ສຳລັບຜູ້ປາຖະກະຖາ ມອບໃຫ້ຄະນະປະຈຳພັກ ແຕ່ລະຂັ້ນ ຫຼື ອາດຈະເຊີນເອົາພະນັກງານປະຕິວັດອາວຸໂສບຳນານ ຜູ້ທີ່ມີບົດບາດ ເປັນຜູ້ປາຖະກະຖາຕາມເງື່ອນໄຂຕົວຈິງ.

3. ສາຍສາລະຄະດີກ່ຽວກັບປະຫວັດມູນເຊື້ອ ຂອງປະທານ ສຸພານຸວົງ, ມູນເຊື້ອຂອງຊາດ-ຂອງພັກ, ຜົນງານ ແລະ ຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ພາຍຫລັງສຳເລັດ ການຈັດຕັ້ງໂຄສະນາ-ປາຖະກະຖາ ລາຍງານໃຫ້ຄະນະໂຄສະນາອົບຮົມສູນກາງພັກ ກຳນົດ 30 ວັນ.

ຫວັງຢ່າງຍິ່ງວ່າຈະໄດ້ຮັບການຮ່ວມມື ໃນການຈັດຕັ້ງການໂຄສະນາ-ປາຖະກະຖາຄັ້ງນີ້ດ້ວຍ.

ຮອງ ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ

ຄະນະໂຄສະນາອົບຮົມສູນກາງພັກ

ລາວປາວຊົ່ງ ນະວົງໄຊ

สแกนด้วย CamScanner